ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ ໐໓໔໕ /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 12 ເມສາ 2015

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າແບບສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR ຂອງສັນຍາການຄ້າດ້ານສິນຄ້າ ອາຊຽນ-ເກົາຫລີ ທີ່ໂອນຍ້າຍຈາກລະຫັດສິນຄ້າລະບົບເອກະພາບອາຊຽນ ປີ 2007 ມາເປັນ 2012

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ຜົນກອງປະຊຸມຕົກລົງນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າແບບສະເພາະ ທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR ຂອງສັນຍາການຄ້າດ້ານສິນຄ້າ ອາຊຽນ - ເກົາຫລີ ທີ່ໂອນຍ້າຍຈາກ ລະຫັດສິນຄ້າລະບົບເອກະ ພາບອາຊຽນ ປີ 2007 ມາເປັນ 2012, ໃນລະຫວ່າງວັນທີ 27 - 29 ມັງກອນ 2015 ທີ່ອຸບົນລາດຊະທານີ, ປະເທດ ໄທ.
- ອີງຕາມການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

### ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ

ມາດຕາ 01: ປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າແບບສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR (Product Specific Rules) ຂອງສັນຍາການຄ້າດ້ານສິນຄ້າ ອາຊຽນ-ເກົາຫລີ ທີ່ໂອນຍ້າຍຈາກລະຫັດສິນຄ້າລະບົບເອກະພາບອາຊຽນ ປີ 2007 ມາເປັນ 2012 ຈຳນວນ 529 ລາຍການ.

ມາດຕາ 02: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບ ແນະນຳ ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດ ກ່ຽວກັບ ລະບຽບການດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ຢ່າງຫຼັງ ນັບແຕ່ ວັນທີ 01 ພຶດສະພາ 2015 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ມ. ເຂັມມະນີ ພົນເສນາ